**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****************************

ສຳນັກງານນາຍົກລັດຖະມົນຕີ

ເລກທີ 159/ສນຍ

# ຂໍ້ກຳນົດ

## ວ່າດ້ວຍການຄຸ້ມຄອງທຸລະກິດບໍລິການ ໂຮງແຮມ ແລະ ເຮືອນພັກ

---

- *ອີງຕາມ ກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ 005/ສພຊ, ລົງວັນທີ 18 / 07 / 1994*
- *ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 31/ນຍ,... ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທຸລະກິດ ລົງວັນທີ 01 / 02 / 1996*
- *ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 100/ນຍ, ລົງວັນທີ 23 / 12 / 1992,...ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງອົງການທ່ອງທ່ຽວແຫ່ງຊາດ*
- *ອີງຕາມ ຄຳສັ່ງ ຂອງ ນາຍົກລັດຖະມົນຕີ ເລກທີ 02/ນຍ,ລົງວັນທີ 14 / 02 / 1995, ວ່າດ້ວຍການປັບປຸງດ້ານການຈັດຕັ້ງ ແລະ ການຄຸ້ມຄອງວຽກງານທ່ອງທ່ຽວ*
- *ອີງຕາມ ການສະເໜີ ຂອງ ອົງການທ່ອງທ່ຽວແຫ່ງຊາດ*

ເພື່ອເຮັດໃຫ້ການຄຸ້ມຄອງວຽກງານທ່ອງທ່ຽວ ແລະ ອຸດສະຫະກຳທ່ອງທ່ຽວ ມີພື້ນຖານທາງດ້ານລະບຽບຫລັກການ, ເປັນເອກະພາບໃນທົ່ວປະເທດ ແນ່ໃສ່ຍົກສູງຄຸນນະພາບໃນການບໍລິການ ແລະ ປະສິດທິຜົນ ໃນການດຳເນີນທຸລະກິດ ໂດຍຮັບປະກັນວຽກງານປ້ອງກັນຄວາມສະຫງົບ-ຄວາມເປັນລະບຽບຮຽບຮ້ອຍ ຂອງ ສັງຄົມ, ສ້າງເງື່ອນໄຂອັນສະດວກ ແລະ ຄວາມປອດໄພ ໃຫ້ແກ່ຜູ້ມາຊົມໃຊ້ການບໍລິການ ໃນສະຖານທີ່ໂຮງແຮມ-ເຮືອນພັກ.

## ສຳນັກງານນາຍົກລັດຖະມົນຕີ ອອກຂໍ້ກຳນົດ :

## ພາກທີ I

## ຫລັກການທົ່ວໄປ

**<u>ມາດຕາ 1</u>**: ໂຮງແຮມ ແລະ ເຮືອນພັກ ແມ່ນເຄຫະສະຖານ ທີ່ສະໜອງຫ້ອງພັກແຮມ ໃຫ້ບຸກຄົນທີ່ຕ້ອງການ ບົນພື້ນຖານໃຊ້ຈ່າຍຄ່າບໍລິການຕ່າງໆ.

ຂໍ້ກຳນົດສະບັບນີ້ ໃຫ້ເອີ້ນວ່າ: " ໂຮງແຮມ " ສຳລັບເຄຫະສະຖານ ທີ່ມີຫ້ອງພັກແຮມ ຢູ່ໃນສະພາບໃຊ້ໄດ້ແຕ່ສິບຫາ ( 15 ) ຫ້ອງຂຶ້ນໄປ. ບັນດາເຄຫະສະຖານທີ່ມີຫ້ອງພັກແຮມຕ່ຳກວ່າ ສິບຫ້າ ( 15 ) ຫ້ອງ ໃຫ້ເອີ້ນວ່າ: " ເຮືອນພັກ ".

ຂໍ້ກຳນົດສະບັບນີ້ ລວມເອົາທັງເຮືອທ່ອງທ່ຽວ ທີ່ບໍລິການຫ້ອງພັກແຮມ.

**<u>ມາດຕາ 2</u>**: ໂຮງແຮມ-ເຮືອນພັກ ມີຈຸດປະສົງໃຫ້ບຸກຄົນເຊົ່າພັກແຮມເປັນແຕ່ລະວັນ, ແຕ່ລະອາທິດ ຫລື ແຕ່ລະເດືອນ, ແຕ່ບໍ່ແມ່ນບ່ອນຢູ່ຖາວອນ. ໂຮງແຮມ-ເຮືອນພັກດັ່ງກ່າວ ຕ້ອງປະກອບພື້ນຖານວັດຖຸອຸປະກອນອັນຈຳເປັນ, ທັງຮັບປະກັນມາດຕະຖານຄຸນນະພາບ ເພື່ອຮັບໃຊ້ ແລະ ບໍລິການແຂກທີ່ມາພັກແຮມ.

**<u>ມາດຕາ 3</u>**: ໂຮງແຮມ-ເຮືອນພັກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ຈະຖືກຈັດວາງເປັນລຳດັບຂັ້ນບົນພື້ນຖານເງື່ອນໄຂ ແລະ ມາດຕະຖານຂອງໂຮງແຮມ-ເຮືອນພັກ ທີ່ໄດ້ກຳນົດ ແລະ ປະກາດໃຊ້ຕ່າງຫາກ.

ລຳດັບຂັ້ນຂອງໂຮງແຮມ-ເຮືອນພັກ ຈະມີເຄື່ອງໝາຍເປັນຮູບ " ດາວ " ແຕ່ 1 ຫາ 5 ດາວ ໂດຍການຢັ້ງຢືນ ຂອງ ອົງການທ່ອງທ່ຽວແຫ່ງຊາດ.

ໂຮງແຮມ-ເຮືອນພັກ ສາມາດເລື່ອນລຳດັບຂັ້ນຂອງຕົນໄດ້ ຖ້າມີການປັບປຸງ ຍົກລະດັບເງື່ອນໄຂ ແລະ ມາດຕະຖານ ຂອງຕົນ ຕາມລະບຽບຫລັກການ.

ໂຮງແຮມ-ເຮືອນພັກ ຈະຖືກຫລຸດລຳດັບຂັ້ນຂອງຕົນ ຖ້າເຫັນວ່າ ບໍ່ຕອບສະໜອງຕາມເງື່ອນໄຂ ແລະ ມາດຕະຖານ.

**<u>ມາດຕາ 4</u>**: ໂຮງແຮມ-ເຮືອນພັກ ສາມາດເປີດບໍລິການດ້ານຕ່າງໆ ເຊັ່ນ: ຮ້ານອາຫານ, ກິນດື່ມ-ບັນເທີງ, ຂາຍເຄື່ອງຫັດຖະກຳ, ເສີມສວຍ, ຕັດຜົມ ແລະ ອື່ນໆ ທີ່ກົດໝາຍ ແລະ ຂໍ້ກຳນົດສະບັບນີ້ບໍ່ຫວງຫ້າມ. ແຕ່ລະຫົວໜ່ວຍບໍລິການດັ່ງກ່າວ ຕ້ອງຂຶ້ນທະບຽນວິສາຫະກິດ, ທະບຽນອາກອນຢ່າງຖືກຕ້ອງ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການສະເພາະຂອງໃຜລາວ ຈາກຂະແໜງການທີ່ກ່ຽວຂ້ອງເສັຍກ່ອນ ຈຶ່ງສາມາດດຳເນີນທຸລະກິດໄດ້.

**<u>ມາດຕາ 5</u>**: ໂຮງແຮມ-ເຮືອນພັກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ມີໜ້າທີ່ປະຕິບັດພັນທະຕໍ່ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວ ຕາມອັດຕາສ່ວນທີ່ລັດໄດ້ກຳນົດໄວ້ສະເພາະ. ການເກັບຄ່າທຳນຽມດັ່ງກ່າວ ແມ່ນມອບໃຫ້ຫ້ອງການທ່ອງທ່ຽວແຂວງ, ກຳແພງນະຄອນ ທີ່ກ່ຽວຂ້ອງເປັນຜູ້ດຳເນີນການ ແລະ ມອບໂອນເຂົ້າບັນຊີກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວຂອງອົງການທ່ອງທ່ຽວແຫ່ງຊາດ ຕາມລະບຽບການ.

## ພາກທີ II

## ການແບ່ງຂັ້ນ ຄຸ້ມຄອງທຸລະກິດ ບໍລິການໂຮງແຮມ-ເຮືອນພັກ

**<u>ມາດຕາ 6</u>: ອົງການທ່ອງທ່ຽວແຫ່ງຊາດ ມີພາລະບົດບາດ ສິດ ແລະ ໜ້າທີ່ ດັ່ງນີ້:**

1.1 ຄຸ້ມຄອງ, ກວດກາ ແລະກວດການ ໂຮງແຮມ-ເຮືອນພັກ ບົນພື້ນຖານຫລັກການລວມສູນເປັນເອກະພາບໃນທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6, ຂໍ້ 6.18, 6.19, 6.20 ຂອງ ດຳລັດນາຍົກລັດຖະມົນຕີ ເລກທີ 100/ນຍ,ລົງວັນທີ 23/12/1992 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ອົງການທ່ອງທ່ຽວແຫ່ງຊາດ;

1.2 ກວດກາ, ກວດການ ແລະ ອະນຸມັດ ລຳດັບຂັ້ນໂຮງແຮມ-ເຮືອນພັກ ຕາມກົລະນີທີ່ໄດ້ກຳນົດໄວ້ ໃນ ມາດຕາ 19 ແລະ 20 ຂອງຂໍ້ກຳນົດສະບັບນີ້;

1.3 ພິຈາລະນາ ຄຳຮ້ອງຂໍສ້າງຕັ້ງ, ຄຳຮ້ອງຂໍດຳເນີນທຸລະກິດບໍລິການໂຮງແຮມ ຂອງ ການລົງທຶນພາຍໃນ ແລະ ບັນດາໂຄງການຂອງຊາວຕ່າງປະເທດ ທີ່ມາລົງທຶນໃນຂະແໜງໂຮງແຮມ ຢູ່ ສປປ ລາວ;

1.4 ພິຈາລະນາ ການສັ່ງໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ ບໍລິການໂຮງແຮມ ຕາມລະບຽບຫລັກການ ຂອງ ຂໍ້ກຳນົດສະບັບນີ້.

**<u>ມາດຕາ 7</u>: ຫ້ອງການທ່ອງທ່ຽວປະຈຳແຂວງ-ກຳແພງນະຄອນ ເປັນເສນາທິການຊ່ວຍແຂວງ-ກຳແພງນະຄອນ ດ້ານການຄຸ້ມຄອງມະຫາພາກ ກ່ຽວກັບການເຄື່ອນໄຫວທຸລະກິດບໍລິການໂຮງແຮມ-ເຮືອນພັກ ຕາມການແບ່ງຂັ້ນຄຸ້ມຄອງ ຂອງ ລັດ ເຊິ່ງມີພາລະບົດບາດ, ສິດ ແລະ ໜ້າທີ່ ດັ່ງຕໍ່ໄປນີ້:**

1.1 ຄຸ້ມຄອງ ດ້ານການເຄື່ອນໄຫວ ຂອງ ບັນດາຫົວໜ່ວຍທຸລະກິດບໍລິການໂຮງແຮມ-ເຮືອນພັກ ໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ລັດປະກາດໃຊ້ ແລະ ຂໍ້ກຳນົດລະບຽບຫລັກການຕ່າງໆ ທີ່ອົງການທ່ອງທ່ຽວແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີວາງອອກ;

1.2 ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບໂຄງການລົງທຶນຂອງຕ່າງປະເທດ ໃນຂະແໜງໂຮງແຮມ ທີ່ຕັ້ງຢູ່ໃນທ້ອງຖິ່ນຂອງຕົນ ໂດຍຜ່ານຄຳເຫັນຂອງແຂວງ-ກຳແພງນະຄອນ ແລະ ອົງການທ່ອງທ່ຽວແຫ່ງຊາດ ເພື່ອສະເໜີຕໍ່ຄະນະກຳມະການຄຸ້ມຄອງການລົງທຶນພິຈາລະນາອານຸມັດ;

1.3 ຄົ້ນຄວ້າ ຄຳຮ້ອງຂໍສ້າງຕັ້ງ, ຄຳຮ້ອງຂໍດຳເນີນທຸລະກິດໂຮງແຮມ ໂດຍຜ່ານຄຳເຫັນຂອງອົງການທ່ອງທ່ຽວແຫ່ງຊາດ ເພື່ອນຳສະເໜີເຈົ້າແຂວງ-ເຈົ້າຄອງກຳແພງນະຄອນພິຈາລະນາອະນຸມັດ. ສຳລັບທຸລະກິດເຮືອນພັກ ແມ່ນນຳສະເໜີໂດຍກົງຕໍ່ເຈົ້າແຂວງ-ເຈົ້າຄອງກຳແພງນະຄອນ ເພື່ອພິຈາລະນາອະນຸມັດ;

1.4 ດຳເນີນການຕິດຕາມ, ເກັບກຳສະພາບການເຄື່ອນໄຫວທຸລະກິດ ຂອງ ບັນດາຫົວໜ່ວຍໂຮງແຮມ-ເຮືອນພັກທັງໝົດ ທີ່ຕັ້ງຢູ່ໃນ ແຂວງ-ກຳແພງນະຄອນ ຂອງຕົນ ຢ່າງເປັນປົກກະຕິ, ຕີລາຄາ ແລະ ມີວິທີແກ້ໄຂບັນຫາທີ່ເກີດຂຶ້ນຢ່າງຖືກຕ້ອງ ແລະ ເໝາະສົມ ຕາມພາລະບົດບາດ ຂອງຕົນ ໂດຍມີການປະສານສົມທົບກັບບັນດາພາກສ່ວນຂະແໜງການທີ່ກ່ຽວຂ້ອງ ຖ້າຈຳເປັນ, ແນ່ໃສ່ປັບປຸງຄຸນນະພາບການບໍລິການ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

1.5 ໃນກໍລະນີທີ່ເຫັນວ່າ ມີຄວາມຈຳເປັນຕ້ອງດຳເນີນການກວດກາກວດການຕໍ່ທຸລະກິດໂຮງແຮມ-ເຮືອນພັກ ໃດໜຶ່ງ ຕ້ອງສະເຫນີເຈົ້າແຂວງ-ເຈົ້າຄອງກຳແພງນະຄອນ ເພື່ອແຕ່ງຕັ້ງຄະນະກຳມະການສະເພາະກິດ ( ຊົ່ວຄາວ ) ຂື້ນ ຊຶ່ງປະກອບດ້ວຍບັນດາພາກສ່ວນຂະແໜງການກ່ຽວຂ້ອງ ເພື່ອດຳເນີນງານ ຕາມລະບຽບການ;

**1.6 ປະຕິບັດມາດຕະການຕ່າງໆ ຕໍ່ຫົວໜ່ວຍທຸລະກິດ ໂຮງແຮມ-ເຮືອນພັກ ທີ່ລະເມີດ ແລະ ຝ່າຝືນ ຕໍ່ລະບຽບກົດໝາຍຂອງບ້ານເມືອງ ແລະ ຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ ຄືດັ່ງນີ້:**

- ເປັນເຈົ້າການປະຕິບັດການຕັກເຕືອນ, ປັບໃໝ ຢ່າງທັນການ
- ສັ່ງໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ ເຮືອນພັກ ໂດຍການຕົກລົງເຫັນດີຂອງເຈົ້າແຂວງ-ເຈົ້າຄອງກຳແພງນະຄອນ
- ສັ່ງໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດໂຮງແຮມ ໂດຍຜ່ານຄຳເຫັນຂອງອົງການທ່ອງທ່ຽວແຫ່ງຊາດ ແລະ ການຕົກລົງເຫັນດີຂອງເຈົ້າແຂວງ-ເຈົ້າຄອງກຳແພງນະຄອນ;

1.7 ທຸກການເຄື່ອນໄຫວຄຸ້ມຄອງທຸລະກິດ ໂຮງແຮມ-ເຮືອນພັກ ຕ້ອງລາຍງານຢ່າງເປັນປະຈຳໃຫ້ແຂວງ-ກຳແພງນະຄອນ ແລະ ອົງການທ່ອງທ່ຽວແຫ່ງຊາດ ຊາບ, ເພື່ອຕິດຕາມ ເກັບກຳສະພາບໃຫ້ແທດເໝາະກັບຕົວຈິງ ແລະ ມີທິດຊີ້ນຳຢ່າງຖືກຕ້ອງ, ທັນການ.

## ພາກທີ III

## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫົວໜ່ວຍທຸລະກິດ ບໍລິການໂຮງແຮມ-ເຮືອນພັກ

**ມາດຕາ 8: ບັນດາ ໂຮງແຮມ-ເຮືອນພັກ ມີພາລະບົດບາດ, ສິດ ແລະ ໜ້າທີ່ ດັ່ງຕໍ່ໄປນີ້:**

8.1 ປະຕິບັດ ຂໍ້ກຳນົດສະບັບນີ້ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຂັ້ມງວດ;

8.2 ໃຫ້ການບໍລິການແຂກ ທີ່ເຂົ້າມາພັກແຮມເປັນຢ່າງດີ ແລະ ຮັບຜິດຊອບທຸກເຫດການທີ່ເກີດຂຶ້ນ ຢູ່ພາຍໃນໂຮງແຮມ-ເຮືອນພັກ ອັນເນື່ອງມາຈາກຄວາມບົກພ່ອງ ຂອງຕົນ;

8.3 ຮັບປະກັນລະບົບຄວາມປອດໄພໃຫ້ແກ່ແຂກທີ່ມາຊົມໃຊ້ການບໍລິການເປັນຕົ້ນຄື: ລະບົບປ້ອງກັນອັກຄີໄພ, ທາງອອກສຸກເສີນ, ການປ້ອງກັນໂຈລະກຳ, ການວາງລະບົບໄຟຟ້າ ແລະ ອື່ນໆ;

8.4 ຈົດກ່າຍ ແລະ ບັນທຶກຂໍ້ມູນກ່ຽວກັບແຂກ ທີ່ເຂົ້າພັກແຮມໃນແຕ່ລະຄັ້ງ ເຊັ່ນ: ຊື່ ແລະ ນາມສະກຸນ, ວັນເດືອນປີເກີດ, ສັນຊາດ, ອາຊີບ, ເລກໜັງສືຜ່ານແດນ ຫລື ໃບຜ່ານແດນ ຫລື ບັດປະຈຳຕົວ, ວັດຖຸປະສົງໃນການເດີນທາງ, ວັນເຂົ້າພັກແຮມ, ວັນອອກ, ມາຈາກໃສ, ຜ່ານດ່ານໃດ, ຫ້ອງພັກເລກທີເທົ່າໃດ ແລະ ຂໍ້ມູນອື່ນທີ່ທາງໂຮງແຮມ-ເຮືອນພັກ ເຫັນວ່າຈຳເປັນ ແລະຜູ້ເຂົ້າພັກແຮມຕ້ອງລົງລາຍເຊັນໃນໃບດັ່ງກ່າວ.

ເກັບກຳສະຖິຕິແຂກ ທີ່ມາພັກເຊົາຢ່າງເປັນລະບົບໃນແຕ່ລະເດືອນ ແລະ ສົ່ງສະຖິຕິດັ່ງກ່າວ ໃຫ້ຫ້ອງການທ່ອງທ່ຽວຂອງແຂວງ-ກຳແພງນະຄອນ ແລະ ປກສ ເມືອງ

ຫຼື ແຂວງ-ກຳແພງນະຄອນ ຕາມຈຸດທີ່ຕັ້ງຂອງໂຮງແຮມ-ເຮືອນພັກ; ພ້ອມກັນນັ້ນ ກໍເພື່ອຄວາມສະດວກໃນການປະສານງານກັບເຈົ້າໜ້າທີ່ກ່ຽວຂ້ອງໃນຂັ້ນຕໍ່ໄປ;

8.5 ໃຫ້ການຮ່ວມມືເປັນຢ່າງດີ ກັບເຈົ້າໜ້າທີ່ກ່ຽວຂ້ອງທີ່ລົງປະຕິບັດໜ້າທີ່ກວດກາກວດການຢູ່ໂຮງແຮມ-ເຮືອນພັກ ຂອງຕົນ;

8.6 ປະກອບພື້ນຖານວັດຖຸອຸປະກອນ ໃຫ້ເໝາະສົມຕາມເງື່ອນໄຂ ແລະ ລຳດັບຂັ້ນຂອງປະເພດໂຮງແຮມ-ເຮືອນພັກ ທີ່ຕົນຕ້ອງການ;

8.7 ປົກປັກຮັກສາສິ່ງແວດລ້ອມ ໂດຍການຕິດຕັ້ງລະບົບບຳບັດນ້ຳໂສໂຄກ ແລະ ເກັບຂີ້ເຫຍື້ອ ສຳລັບໂຮງແຮມທີ່ມີ 50 ຫ້ອງນອນຂຶ້ນໄປ. ສ່ວນໂຮງແຮມທີ່ມີຫ້ອງນອນຕ່ຳກວ່າ 50 ຫ້ອງ ແລະ ເຮືອນພັກຕ້ອງມີ ລະບົບລະບາຍນ້ຳໂສໂຄກ ແລະ ເກັບຂີ້ເຫຍື້ອ. ໃນກໍລະນີຫາກມີຫ້ອງບັນເທີງ, ໂຮງແຮມ-ເຮືອນພັກຕ້ອງຮັບປະກັນໃຫ້ມີລະບົບເກັບສຽງເປັນຢ່າງດີ.

<u>ມາດຕາ 9</u>: ໂຮງແຮມ-ເຮືອນພັກ ຕ້ອງມີກົດລະບຽບພາຍໃນ ຂອງຕົນ ບົນພື້ນຖານລະບຽບຫລັກການທີ່ຂະແໜງການກ່ຽວຂ້ອງວາງອອກ ແນ່ໃສ່ຄຸ້ມຄອງພະນັກງານ, ການບໍລິການ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນໂຮງແຮມ-ເຮືອນພັກ. ກົດລະບຽບດັ່ງກ່າວຕ້ອງຕິດໄວ້ໃນຫ້ອງພັກແຮມ ແລະ ຕາມຫ້ອງບໍລິການຕ່າງໆ.

<u>ມາດຕາ 10</u>: - ໂຮງແຮມ-ເຮືອນພັກ ຕ້ອງປະຕິບັດລາຄາຄ່າພັກແຮມໃນຂອບເຂດທີ່ເຈົ້າໜ້າທີ່ກ່ຽວຂ້ອງອະນຸມັດ ບົນພື້ນຖານມາດຕະຖານ ແລະ ລຳດັບຂັ້ນຂອງໂຮງແຮມ-ເຮືອນພັກ;

- ລາຄາ ຄ່າພັກແຮມ ຕ້ອງຕິດປະກາດໃຫ້ແຂກຊາບຢ່າງລະອຽດຈະແຈ້ງ ໃນສະຖານທີ່ຕ້ອນຮັບ ຫລື ກຳນົດແຈ້ງໃນແຜນພັບໂຄສະນາຂອງຕົນ;

- ການປ່ຽນແປງລາຄາ ຄ່າພັກແຮມ ທີ່ນອກເໜືອຂອບເຂດ ໄດ້ກຳນົດໄວ້ນັ້ນ ຈະຕ້ອງແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຮັບຊາບກ່ອນການປະຕິບັດ.

<u>ມາດຕາ 11</u>: ໂຮງແຮມ-ເຮືອນພັກ ຕ້ອງປະຕິບັດລະບົບບັນຊີການເງິນ ທີ່ລັດປະກາດໃຊ້ຢ່າງຄົບຖ້ວນ, ປະຕິບັດພັນທະຕ່າງໆ ຕໍ່ລັດ ຢ່າງຖືກຕ້ອງ ແລະ ເຂັ້ມງວດ. ບັນຊີການເງິນດັ່ງກ່າວຈະຕ້ອງໄດ້ຮັບການສະຫລຸບຕາມກຳນົດເວລາ ແລະ ແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຮັບຊາບ.

<u>ມາດຕາ 12</u>: - ການບໍລິການພາຍໃນໂຮງແຮມ-ເຮືອນພັກ ຕ້ອງປະກອບດ້ວຍພະນັກງານ ທີ່ໄດ້ຜ່ານການຝຶກອົບຮົມ ຫລື ຮຽນຈົບຈາກໂຮງຮຽນວິຊາສະເພາະຄຸ້ມຄອງ ແລະ ບໍລິການໂຮງແຮມ ຢູ່ພາຍໃນ ຫລື ຕ່າງປະເທດ;

- ໂຮງແຮມ-ເຮືອນພັກ ຕ້ອງມີບັນຊີພະນັກງານ ຂອງຕົນ ຢ່າງລະອຽດ ພ້ອມດ້ວຍໃບຢັ້ງຢືນກວດກາສຸຂະພາບຂອງແຕ່ລະຄົນ ໃນແຕ່ລະປີ ແລະ ລາຍງານໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຊາບຖ້າມີການຮ້ອງຂໍ.

## ພາກທີ IV

## ເງື່ອນໄຂ ເພື່ອດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ

**<u>ມາດຕາ 13</u>: ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຢາກດຳເນີນທຸລະກິດ ບໍລິການໂຮງຮມ-ເຮືອນພັກ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:**

**13.1** ມີຄວາມສາມາດ ການປະພຶດຖືກຕ້ອງຕາມ ກົດໝາຍ ແຫ່ງ ສປປ ລາວ;

**13.2** ເປັນບຸກຄົນ ຫລື ນິຕິບຸກຄົນທີ່ບໍ່ເຄີຍມີຄະດີ ຫລື ຖືກສານລົງໂທດ ຍ້ອນເຫດຜົນຕ່າງໆ ເຊັ່ນ: ການສໍ້ໂກງທາງເສດຖະກິດ, ພາສີອາກອນຂອງລັດ, ທຸລະກິດຖືກລົ້ມລະລາຍ, ພົວພັນກັບການຂາຍປະເວນີ, ສິ່ງເສບຕິດ ແລະ ອື່ນໆ;

**13.3** ກໍລະນີເປັນນັກລົງທຶນຊາວຕ່າງປະເທດ ( ບຸກຄົນ ຫລື ນິຕິບຸກຄົນ ) ຕ້ອງຢັ້ງຢືນປະຫວັດ ແລະ ຄວາມເປັນມາກ່ອນເຂົ້າມາລົງທຶນຢູ່ ສປປ ລາວ: ດ້ານວິຊາການ, ຖານະການເງິນ, ກິດຈະກຳ ຂອງຕົນຢູ່ຕ່າງປະເທດ ແລະ ອື່ນໆ;

**13.4** ສຳລັບການດຳເນີນທຸລະກິດບໍລິການເຮືອນພັກຈະອະນຸຍາດໃຫ້ສະເພາະບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນພົນລະເມືອງລາວເທົ່ານັ້ນ.

# ພາກທີ V
# ລະບຽບການຂໍສ້າງຕັ້ງ ແລະ ດຳເນີນທຸລະກິດບໍລິການ ໂຮງແຮມ-ເຮືອນພັກ

**<u>ມາດຕາ 14</u>: ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຢາກສ້າງຕັ້ງ ແລະ ດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ຕ້ອງປະຕິບັດຂັ້ນຕອນ ດັ່ງນີ້:**

**14.1** ຂໍສ້າງຕັ້ງ ແລະ ຂໍຂຶ້ນທະບຽນວິສາຫະກິດ ທີ່ພະແນກການຄ້າຂອງແຂວງ-ກຳແພງນະຄອນ;

**14.2** ຂໍຂຶ້ນທະບຽນອາກອນ ທີ່ພະແນກການເງິນຂອງແຂວງ-ກຳແພງນະຄອນ ພາຍຫລັງໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງ;

**14.3** ຂໍອະນຸຍາດດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ທີ່ຫ້ອງການທ່ອງທ່ຽວກຳແພງນະຄອນ ຫລື ແຂວງທີ່ກ່ຽວຂ້ອງ.

**<u>ມາດຕາ 15</u>: ການຂໍສ້າງຕັ້ງວິສາຫະກິດໂຮງແຮມ-ເຮືອນພັກ ຕ້ອງປະກອບເອກະສານ ດັ່ງຕໍ່ໄປນີ້:**

**15.1** ຄຳຮ້ອງຂໍສ້າງຕັ້ງທຸລະກິດບໍລິການໂຮງແຮມ-ເຮືອນພັກ;

**15.2** ສຳເນົາບັດປະຈຳຕົວ, ຊີວະປະຫວັດລະອຽດ, ໃບຢັ້ງຢືນສຸຂະພາບ ແລະ ໃບຢັ້ງຢືນທີ່ຢູ່ຂອງເຈົ້າຂອງໂຄງການ ຫລື ຜູ້ອຳນວຍການ ( ສຳລັບຄົນຕ່າງດ້າວ ຫລື ຄົນລາວ );

**15.3** ໃບອະນຸຍາດລົງທຶນ ອອກໃຫ້ໂດຍເຈົ້າໜ້າທີ່ກ່ຽວຂ້ອງ, ສຳເນົາໜັງສືຜ່ານແດນ ແລະ ໃບອະນຸຍາດໃຫ້ຢູ່ ສປປ ລາວ ( ສຳລັບຄົນຕ່າງປະເທດ );

**15.4** ໃບແຈ້ງໂທດ ເລກທີ 3;

**15.5** ແຜນຜັງ ໂຮງແຮມ-ເຮືອນພັກ ( ລວມ ແລະລະອຽດ );

**15.6** ບົດວິພາກເສດຖະກິດ;

**15.7** ສັນຍາຫຸ້ນສ່ວນ ( ຖ້າເປັນທຸລະກິດຫຸ້ນສ່ວນ ) ພ້ອມດ້ວຍກົດລະບຽບການບໍລິຫານງານ;

**15.8** ຮູບ 3 x 4 ຈຳນວນ 8 ໃບ;

- **ສຳລັບ ນິຕິບຸກຄົນ ໃຫ້ປະກອບເອກະສານເພີ່ມເຕີມ ດັ່ງນີ້:**

**15.9** ໃບອະນຸຍາດດຳເນີນທຸລະກິດ ອອກໃຫ້ໂດຍເຈົ້າໜ້າທີ່ກ່ຽວຂ້ອງ;

**15.10** ໃບຊຳລະອາກອນຄັ້ງຫລ້າສຸດ;

**15.11** ສັນຍາ ຂໍ້ຜູກພັນ ລະຫວ່າງ ເຈົ້າຂອງໂຮງແຮມ ແລະ ຜູ້ຈັດການໂຮງແຮມ, ໃນກໍລະນີເຈົ້າຂອງໂຮງແຮມບໍ່ແມ່ນຜູ້ຈັດການ.

**ມາດຕາ 16: ການຂໍອະນຸດຍາດດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ຕ້ອງປະກອບເອກະສານ ດັ່ງຕໍ່ໄປນີ້:**

**16.1** ຄຳຮ້ອງຂໍດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ;

**16.2** ສັນຍາເຊົ່າສະຖານທີ່ ( ຖ້າເປັນຂອງຄົນອື່ນ );

**16.3** ໃບອະນຸຍາດປຸກສ້າງ ( ຖ້າເປັນໂຮງແຮມກໍ່ສ້າງຂຶ້ນໃໝ່ ) ຫລື ໃບອະນຸຍາດສ້ອມແປງ ( ຖ້າເປັນເຄຫະເກົ່າ ມາດັດແປງເປັນໂຮງແຮມ-ເຮືອນພັກ ) ອອກໃຫ້ໂດຍເຈົ້າໜ້າທີ່ກ່ຽວຂ້ອງ;

**16.4** ໃບປະກັນໄພທາງແພ່ງຂອງໂຮງແຮມ-ເຮືອນພັກ;

**16.5** ໃບສະຫລຸບຊັບສິນບັດໜີ້ສິນ ກ່ອນເປີດທຸລະກິດ ( ທຶນຮອນ, ເງິນຝາກທະນາຄານ, ຊັບສິນບັດຕ່າງໆ );

**16.6** ກົດລະບຽບພາຍໃນຫົວໜ່ວຍທຸລະກິດ;

**16.7** ສຳເນົາໃບທະບຽນອາກອນ;

**16.8** ຮູບ 3x4 ຈຳນວນ 2 ໃບ.

**ມາດຕາ 17**: ບັນດາໂຄງການລົງທຶນຂອງຊາວຕ່າງປະເທດ ທີ່ໄດ້ຮັບໃບອະນຸຍາດລົງທຶນ ໂດຍສົມບູນແລ້ວ, ຕ້ອງໄປຍື່ນຄຳຮ້ອງຂໍສ້າງຕັ້ງ ແລະ ດຳເນີນທຸລະກິດບໍລິການໂຮງແຮມ ຕາມລະບຽບການ ນຳພາກສ່ວນກ່ຽວຂ້ອງ ຕາມມາດຕາ 13, 14, 15, 16 ເທິງນີ້.

**ມາດຕາ 18: ໃບອະນຸຍາດດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ບໍ່ກຳນົດອາຍຸການນຳໃຊ້ ແຕ່ຕ້ອງໄດ້ຮັບການຢັ້ງຢືນໃນແຕ່ລະປີ ໂດຍເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອສືບຕໍ່ດຳເນີນ ທຸລະກິດ.**

**ການຂໍສືບຕໍ່ການດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ໃນແຕ່ລະປີ ຕ້ອງປະກອບເອກະສານ ດັ່ງຕໍ່ໄປນີ້:**

18.1 ໃບຄຳຮ້ອງຂໍສືບຕໍ່ດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ;

18.2 ໃບເສັຍອາກອນຄັ້ງລ້າສຸດຂອງປີຜ່ານມາ;

18.3 ໃບສະຫລຸບຊັບສິນບັດໜີ້ສິນປະຈຳປີ;

- ສຳລັບໂຮງແຮມ-ເຮືອນພັກ ທີ່ໄດ້ເຄື່ອນໄຫວທຸລະກິດບໍລິການໂຮງແຮມ-ເຮືອນພັກມາກ່ອນການປະກາດໃຊ້ຂໍ້ກຳນົດສະບັບນີ້ ຕ້ອງປະກອບເອກະສານຕື່ມ ດັ່ງນີ້:

18.4 ໃບປະກັນໄພທາງແພ່ງຂອງໂຮງແຮມ-ເຮືອນພັກ;

18.5 ໃບກວດກາ, ກວດການ ໂຮງແຮມ-ເຮືອນພັກ ໂດຍເຈົ້າໜ້າທີ່ກ່ຽວຂ້ອງ;

18.6 ໃບອະນຸຍາດປຸກສ້າງ ຫລື ສ້ອມແປງອາຄານທີ່ຜ່ານມາ;

18.7 ໃບອະນຸຍາດດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ;

18.8 ສັນຍາຫຸ້ນສ່ວນ ແລະ ກົດລະບຽບຂອງຫົວໜ່ວຍທຸລະກິດດັ່ງກ່າວ ( ຖ້າເປັນທຸລະກິດຫຸ້ນສ່ວນ );

18.9 ສຳເນົາບັດປະຈຳຕົວ, ຊີວະປະຫວັດລະອຽດ, ໃບຢັ້ງຢືນສຸຂະພາບ ແລະ ໃບຢັ້ງຢືນທີ່ຢູ່ຂອງເຈົ້າຂອງທຸລະກິດ ຫລື ຂອງຜູ້ອຳນວຍການ ( ຜູ້ຈັດການ ).

## ພາກທີ VI

## ການກວດກາ ກວດການໂຮງແຮມ-ເຮືອນພັກ

**ມາດຕາ 19**: ການອອກໃບອະນຸຍາດ ດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ໂດຍເຈົ້າໜ້າທີ່ກ່ຽວຂ້ອງ ຕ້ອງໄດ້ຜ່ານການກວດກາ, ກວດການ ຕາມລະບຽບຫລັກການ, ມາດຕະຖານທີ່ໄດ້ກຳນົດ ແລະ ປະກາດໃຊ້.

**ມາດຕາ 20:** ການກວດກາ, ກວດການ ສາມາດດຳເນີນໄດ້ຕາມກໍລະນີ ຕໍ່ໄປນີ້:

20.1 ຕາມການສະເໜີຮ້ອງຂໍຂອງເຈົ້າຂອງໂຮງແຮມ-ເຮືອນພັກ;

20.2 ຕາມຄຳສັ່ງຂອງສຳນັກງານນາຍົກລັດຖະມົນຕີ ຫລື ເຈົ້າແຂວງ-ເຈົ້າຄອງກຳແພງນະຄອນ;

20.3 ເກີດມີສະພາບ ແລະ ເຫດການທີ່ຮ້າຍແຮງ ພາຍໃນໂຮງແຮມ-ເຮືອນພັກ;

20.4 ເພື່ອຈັດລຳດັບຂັ້ນ ໂຮງແຮມ-ເຮືອນພັກຄືນໃໝ່.

**ມາດຕາ 21:** ການກວດກາ, ກວດການ ໂຮງແຮມ-ເຮືອນພັກ ໄດ້ແບ່ງອອກເປັນ 2 ລະດັບ ຄື: ລະດັບສູນກາງ ແລະ ທ້ອງຖິ່ນ.

**ຄະນະກຳມະການກວດກາ, ກວດການ ໃນທຸກລະດັບແມ່ນປະກອບດ້ວຍຂະແໜງການດັ່ງຕໍ່ໄປນີ້:**

- ອົງການທ່ອງທ່ຽວແຫ່ງຊາດ ຫລື ຫ້ອງການທ່ອງທ່ຽວແຂວງ-ກຳແພງນະຄອນ;
- ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຫລື ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ-ກຳແພງນະຄອນ;
- ກະຊວງພາຍໃນ ຫລື ປ.ກ.ສ ແຂວງ-ກຳແພງນະຄອນ;
- ກະຊວງສາທາລະນະສຸກ ຫລື ພະແນກສາທາລະນະສຸກແຂວງ-ກຳແພງນະຄອນ.

ຄະນະກຳມະການດັ່ງກ່າວສາມາດປະກອບເຈົ້າໜ້າທີ່ ຈາກຂະແໜງການອື່ນ ທີ່ກ່ຽວຂ້ອງເພີ່ມເຕີມໄດ້ຕາມຄວາມຕ້ອງການ.

ສຳນັກງານນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຄະນະກຳມະການ ກວດກາ ກວດການລະດັບສູນກາງ ຕາມການສະເໜີຂອງອົງການທ່ອງທ່ຽວແຫ່ງຊາດ.

ເຈົ້າຄອງກຳແພງນະຄອນ ຫລື ເຈົ້າແຂວງເປັນຜູ້ແຕ່ງຕັ້ງ ຄະນະກຳມະການກວດກາກວດການ ລະດັບທ້ອງຖິ່ນ ຕາມການສະເໜີຂອງຫ້ອງວ່າການທ່ອງທ່ຽວແຂວງ-ກຳແພງນະຄອນ.

ດ້ານກວດກາ, ກວດການ ຕ້ອງມີຈຸດປະສົງ, ເປົ້າໝາຍທີ່ແນ່ນອນ ແລະ ພົວພັນກັບຄວາມປອດໄພ, ການຄຸ້ມຄອງ, ສະພາບແວດລ້ອມ ແລະ ຫລັກທອານາໄມເປັນຕົ້ນ.

# ພາກທີ VII
## ຂໍ້ຫ້າມ ແລະ ການປະຕິບັດມາດຕະການ

**ມາດຕາ 22. ຂໍ້ຫ້າມ**

**22.1** ຫ້າມໂຮງແຮມ-ເຮືອນພັກ ນຳໃຊ້ ຫລື ອະນຸຍາດໃຫ້ບຸກຄົນ, ກຸ່ມຄົນສວຍໃຊ້ ສະຖານທີ່ຂອງຕົນ ເພື່ອເຄື່ອນໄຫວໃນສິ່ງທີ່ຜິດກົດໝາຍ ເຊັ່ນ:

**22.1.1** ຄ້າຂາຍເຖື່ອນ: ສິນຄ້າເກືອດຫ້າມ, ສິນຄ້າບໍ່ເສັຍພາສີ, ສິ່ງເສບຕິດ ແລະ ອື່ນໆ;

**22.1.2** ຂາຍປະເວນີ ໃນຮູບແບບຕ່າງໆ, ສາຍຮູບເງົາ, ວິດີໂອ ( VIDEO ), ຟີມສະໄລ, ແຜ່ນຊີດີຣອມ ( C D Rom ) ທີ່ມີຮູບພາບ ແລະ ເນື້ອໃນລາມົກອະນາຈານ;

**22.1.3** ຫລີ້ນການພະນັນ ແລະ ເສບສິ່ງເສສບຕິດທຸກປະເພດ;

**22.1.4** ຈັດຕັ້ງການຊຸມນຸມ ເຄື່ອນໄຫວຕ່າງໆ ທີ່ສົ່ງຜົນສະທ້ອນອັນບໍ່ດີ ເຖິງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບສຸກ.

**22.2** ຫ້າມໂຮງແຮມ-ເຮືອນພັກ ອະນຸຍາດໃຫ້ບຸກຄົນ ຫລື ກຸ່ມຄົນ ນຳເອົາອາວຸດ, ທາດລະເບີດ ຫລື ສິ່ງທີ່ເປັນພິດໄພອື່ນໆ ເຂົ້າຫ້ອງພັກແຮມ.

**22.3** ຫ້າມໂຮງແຮມ-ເຮືອນພັກ ທີ່ຍັງບໍ່ທັນໄດ້ຜ່ານການກວດກາກວດການ ຕາມລະບຽບຫລັກການເປີດການບໍລິການຢ່າງເດັດຂາດ.

**22.4** ຫ້າມເຈົ້າຂອງໂຮງແຮມ-ເຮືອນພັກ ມອບ-ໂອນ, ຖ່າຍທອດ ຫລື ຂາຍ ໃບອະນຸຍາດດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງ.

ຜູ້ຮັບ, ຜູ້ສືບທອດ ຫລື ຜູ້ຊື້ໃບອະນຸຍາດດັ່ງກ່າວ ຈະຖືວ່າໂມຄະ ແລະ ບໍ່ມີຜົນບັງຄັບໃຊ້ໃນດ້ານກົດໝາຍ.

**22.5** ຫ້າມບຸກຄົນ ຫລື ນິຕິບຸກຄົນໃດ ດຳເນີນທຸລະກິດບໍລິການໂຮງແຮມ-ເຮືອນພັກ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າໜ້າທີ່ກ່ຽວຂ້ອງຢ່າງເດັດຂາດ.

**ມາດຕາ 23: ການປະຕິບັດມາດຕະການ**

**ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງໂຮງແຮມ-ເຮືອນພັກ ທີ່ລະເມີດລະບຽບກົດໝາຍ ແລະ ຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດມາດຕະການຕາມກໍລະນີໜັກ ຫລື ເບົາ ດັ່ງນີ້:**

**23.1** ຕັກເຕືອນດ້ວຍຈົດໝາຍທາງການ;

**23.2** ຕັກເຕືອນ ແລະ ປັບໃໝ່;

**23.3** ປັບໃໝ ແລະ ໂຈະການດຳເນີນທຸລະກິດ;

**23.4** ປັບໃໝ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ ຢ່າງຖາວອນ;

**23.5** ປັບໃໝ ແລະ ກ່າວຟ້ອງຂື້ນສານ.

ມາດຕາ 24: ໂຮງແຮມ-ເຮືອນພັກ ຈະຖືກຕັກເຕືອນດ້ວຍຈົດໝາຍທາງການ ເນື່ອງຈາກມີການຄຸ້ມຄອງບໍລິຫານ ແລະ ບໍລິການທີ່ຜິດປົກກະຕິ, ບໍ່ສອດຄ່ອງກັບຫລັກການ ແລະ ລະບົບຄຸ້ມຄອງຂອງໂຮມແຮມ-ເຮືອນພັກ, ຂາດຫລັກອະນາໄມ ແລະ ການຮັກສາຄວາມປອດໄພ, ຂາດຈະລິຍະທຳ ໃນການບໍລິຫານເປັນຕົ້ນ. ການຕັກເຕືອນດັ່ງກ່າວຈະບໍ່ມີການປັບໃໝ ແຕ່ລະປະການ.

ໂຮງແຮມ-ເຮືອນພັກ ຈະຕ້ອງແກ້ໄຂຄວາມຜິດພາດ ແລະ ຄວາມຂາດຕົກບົກພ່ອງຂອງຕົນ ຕາມກຳນົດເວລາ ທີ່ທາງເຈົ້າໜ້າທີ່ກ່ຽວຂ້ອງ ໄດ້ແຈ້ງໃຫ້ຊາບໃນໃບຕັກເຕືອນ.

**ມາດຕາ 25: ໂຮງແຮມ-ເຮືອນພັກ ຈະຖືກຕັກເຕືອນ, ປັບໃໝ ແລະ/ຫລື ສັ່ງໂຈະການດຳເນີນທຸລະກິດ ເນື່ອງຈາກ:**

**25.1** ບໍ່ປະຕິບັດຕາມຄຳຕັກເຕືອນ ຄັ້ງທີ 1 ຢ່າງຄົບຖ້ວນ ຕາມກຳນົດເວລາ. ໂຮງແຮມ-ເຮືອນພັກຈະຖືກປັບໃໝ ບໍ່ເກີນ 50.000 ກີບ ທຽບເທົ່າ 5 ໂດລາສະຫະລັດ;

**25.2** ບໍ່ປະຕິບັດພັນທະຂອງຕົນ ຕໍ່ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວຕາມລະບຽບຫລັກການ ແລະ ກຳນົດເວລາທີ່ທາງເຈົ້າໜ້າທີ່ກ່ຽວຂ້ອງໄດ້ກຳນົດໄວ້.

ໃນກໍລະນີທີ່ຫາກປະຕິບັດພັນທະຂອງຕົນ ຊັກຊ້າເກີນກວ່າ 1 ເດືອນ ຢ່າງບໍ່ສົມເຫດສົມຜົນ, ໂຮງແຮມ-ເຮືອນພັກດັ່ງກ່າວຈະຖືກປັບໃໝ 10% ຂອງມູນຄ່າພັນທະທີ່ຈະຕ້ອງປະຕິບັດ.

ອັດຕາສ່ວນປັບໃໝຈະເພີ່ມຂຶ້ນໃນແຕ່ລະເດືອນ 10% ຂອງຈຳນວນພັນທະທັງໝົດທີ່ຍັງບໍ່ທັນຈ່າຍ ບວກກັບຈຳນວນຄ່າປັບໃໝຄັ້ງກ່ອນ, ແຕ່ອັດຕາຄ່າປັບໃໝສູງສຸດບໍ່ໃຫ້ເກີນ 50%. ຖ້າອັດຕາປັບໃໝທັງໝົດຫາກເຖິງ 50%, ໂຮງແຮມ-ເຮືອນພັກດັ່ງກ່າວຈະຖືກສັ່ງໂຈະການດຳເນີນທຸລະກິດ;

**25.3** ນຳໃຊ້ ຫລື ອະນຸຍາດໃຫ້ຄົນອື່ນສວຍໃຊ້ ສະຖານທີ່ຂອງຕົນ ເປັນບ່ອນຫລິ້ນການພະນັນ, ຂາຍປະເວນີ, ຄ້າຂາຍເຖື່ອນ, ສ້າງ-ຈຳໜ່າຍ ແລະ ສາຍວີດີໂອ ທີ່ມີຮູບພາບ ແລະ ເນື້ອໃນລາມົກອານາຈານ;

ໂຮງແຮມ-ເຮືອນພັກດັ່ງກ່າວ ຈະຖືກປັບໃໝ 25% ຂອງມູນຄ່າເຄື່ອງຂອງ ແລະ ຊັບສິນທີ່ຍຶດມາໄດ້ ຫລື ມູນຄ່າທີ່ໂຮງແຮມ-ເຮືອນພັກ ໄດ້ຮັບຈາກກິດຈະກຳດັ່ງກ່າວ; ພ້ອມກັນນັ້ນ ຍັງຈະຖືກສັ່ງໂຈະການດຳເນີນທຸລະກິດຂອງຕົນ.

**25.4** ມອບ-ໂອນ, ຖ່າຍທອດ ຫຼື ຂາຍໃບອະນຸຍາດດຳເນີນທຸລະກິດ ບໍລິການໂຮງແຮມ-ເຮືອນພັກ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງ.

ໂຮງແຮມ-ເຮືອນພັກ ດັ່ງກ່າວຈະຖືກປັບໃໝ 15% ຂອງມູນຄ່າຂອງການສະຫລຸບຊັບສົມບັດໜີ້ສິນ ຂອງປີຜ່ານມາ ສຳລັບໂຮງແຮມ-ເຮືອນພັກ ທີ່ໄດ້ດຳເນີນການບໍລິການ ແຕ່ 1 ປີຂຶ້ນເມືອ; ຂອງການສະຫລຸບຊັບສົມບັດໜີ້ສິນກ່ອນເປີດທຸລະກິດສຳລັບໂຮງແຮມ-ເຮືອນພັກ ທີ່ໄດ້ດຳເນີນການບໍລິການຕ່ຳກວ່າ 1 ປີ.

ມາດຕາ 26: ໂຮງແຮມ-ເຮືອນພັກ ທີ່ໄດ້ຖືກຕັກເຕືອນ ແລະ ປັບໃໝ ຢ່າງໜ້ອຍ 2 ຄັ້ງແລ້ວ, ແຕ່ຍັງບໍ່

ເຂັດຫລາບ ແລະ ຍັງບໍ່ແກ້ໄຂຄວາມຂາດຕົກບົກພ່ອງຂອງຕົນ, ຈະຖືກສັ່ງໂຈະການດໍາເນີນທຸລະກິດ.

**ມາດຕາ 27**: ການສັ່ງໂຈະການດໍາເນີນທຸລະກິດ ແຕ່ລະຄັ້ງແມ່ນບໍ່ເກີນ 3 ເດືອນ. ກໍານົດເວລາໂຈະກິດຈະການດັ່ງກ່າວສາມາດຕໍ່ໄປໄດ້ອີກບໍ່ເກີນ 2 ເດືອນ, ຖ້າເຫັນວ່າຍັງບໍ່ປັບປຸງ ແກ້ໄຂ ຫລື ຍັງຢູ່ໃນໄລຍະປັບປຸງແກ້ໄຂ.

ໃນກໍລະນີໂຮງແຮມ-ເຮືອນພັກ ຍັງບໍ່ທັນແກ້ໄຂຄວາມຂາດຕົກບົກພ່ອງຂອງຕົນ ພາຍຫລັງສິ້ນສຸດການຕໍ່ເວລາ ຄັ້ງທີ 2 ນັ້ນ, ເຈົ້າໜ້າທີ່ກ່ຽວຂ້ອງຈະຕ້ອງສັ່ງປິດກິດຈະການດັ່ງກ່າວໂດຍເດັດຂາດ.

ຖ້າໃນເວລາຕໍ່ມາໂຮງແຮມ-ເຮືອນພັກດັ່ງກ່າວ ຫາກຕ້ອງການເປີດກິດຈະການທີ່ຖືກສັ່ງປິດໄປແລ້ວນັ້ນຄືນໃໝ່, ໂຮງແຮມ-ເຮືອນພັກກ່ຽວຂ້ອງຈະຕ້ອງຍື່ນຄໍາຮ້ອງຂໍເປີດກິດຈະການຄືນໃໝ່ຕາມຂັ້ນຕອນ, ເງື່ອນໄຂ ແລະ ລະບຽບຫລັກການຂອງຂໍ້ກໍານົດສະບັບນີ້.

**ມາດຕາ 28**: **ໂຮງແຮມ-ເຮືອນພັກ ຈະຖືກຖອນໃບອະນຸຍາດດໍາເນີນທຸລະກິດຂອງຕົນ ເນື່ອງຈາກ:**

28.1 ຢຸດຕິກິດຈະການຂອງຕົນຢ່າງຖາວອນ ດ້ວຍຄວາມສະໝັກໃຈ ຫລື ຖືກສັ່ງປິດກິດຈະການ ຕາມມາດຕາ 27;

28.2 ມີຄໍາຕັດສິນຂອງສານໃຫ້ຖອນໃບອະນຸຍາດດໍາເນີນທຸລະກິດ;

28.3 ບໍ່ປະຕິບັດພັນທະຂອງຕົນໃຫ້ລັດ ກໍຄື ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວ ໃນເວລາ 1 ປີ.

**ມາດຕາ 29**: **ໂຮງແຮມ-ເຮືອນພັກ ຈະຖືກກ່າວຟ້ອງເພື່ອດໍາເນີນຄະດີ ເນື່ອງຈາກ:**

29.1 ບໍ່ຍິນຍອມແກ້ໄຂຄວາມເສັຍຫາຍ ເນື່ອງມາຈາກການກະທໍາຜິດຂອງຕົນ;

29.2 ບໍ່ປະຕິບັດພັນນະຂອງຕົນໃຫ້ລັດ ກໍຄື ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວໃນກໍານົດ 1 ປີ.

**ມາດຕາ 30**: ສໍາລັບເງິນທີ່ໄດ້ຈາກການປັບໃໝຕ່າງໆ ໃຫ້ມອບເຂົ້າກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວຕາມລະບຽບການ.

**ມາດຕາ 31**: ໂຮງແຮມ-ເຮືອນພັກໃດ, ຫາກໄດ້ດໍາເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ ແລະ ຂໍ້ກໍານົດສະບັບນີ້, ບໍລິການແຂກດ້ວຍຄຸນນະພາບ ແລະ ສ້າງຊື່ສຽງ ໃຫ້ ສປປ ລາວ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຕາມຄວາມເໝາະສົມຈາກເຈົ້າໜ້າທີ່ກ່ຽວຂ້ອງ.

# ພາກທີ VIII
## ຂໍ້ກໍານົດສຸດທ້າຍ

**ມາດຕາ 32**: ຂໍ້ກໍານົດສະບັບນີ້ ມີຜົນບັງຄັບໃຊ້ ໃນຂອບເຂດທົ່ວປະເທດ.

**ມາດຕາ 33**: ບັນດາກິດຈະການຕ່າງໆ ທີ່ຢູ່ໃນສະຖານທີ່ຂອງໂຮງແຮມ-ເຮືອນພັກ ຄື: ຮ້ານອາຫານ-ກິນດື່ມ, ບັນເທີງ, ອົບນວດແຜນບູຮານ, ເສີມສວຍ, ຂາຍເຄື່ອງທີ່ລະນຶກ, ກິລາກາຍະກຳ ແມ່ນຢູ່ພາຍໃຕ້ການຄຸ້ມຄອງ ກວດກາ ກວດການ ດ້ານການບໍລິການຂອງອົງການທ່ອງທ່ຽວແຫ່ງຊາດ ແລະ ຫ້ອງການທ່ອງທ່ຽວແຂວງ-ກຳແພງນະຄອນ. ສ່ວນດ້ານເນື້ອໃນກ່ຽວກັບວິຊາສະເພາະວິຊາການ ແມ່ນຂຶ້ນກັບພາກສ່ວນຂະແໜງການກ່ຽວຂ້ອງ.

**ມາດຕາ 34**: ອົງການທ່ອງທ່ຽວແຫ່ງຊາດ ມີໜ້າທີ່ອອກບົດແນະນຳຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້ ແລະ ປະສານສົມທົບ ກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການອ້ອມຂ້າງລັດຖະບານ ທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ຢ່າງກວ້າງຂວາງ ແລະ ທົ່ວເຖິງ.

**ມາດຕາ 35**: ຂໍ້ກຳນົດສະບັບນີ້ລົບລ້າງ ແລະ ໃຊ້ແທນຂໍ້ກຳນົດຂອງກະຊວງການຄ້າ ແລະ ທ່ອງທ່ຽວ ສະບັບເລກທີ 219/ກຄທ,ລົງວັນທີ 5 / 5 / 92 ວ່າດ້ວຍການຄຸ້ມຄອງທຸລະກິດໂຮງແຮມ ແລະ ເຮືອນພັກ.

**ມາດຕາ 36:** ໂຮງແຮມ-ເຮືອນພັກ ທີ່ໄດ້ດຳເນີນທຸລະກິດມາກ່ອນ ການປະກາດໃຊ້ຂໍ້ກຳນົດສະບັບນີ້ ມີໜ້າທີ່ປັບປຸງແກ້ໄຂຖານະຂອງຕົນໃຫ້ສອດຄ່ອງກັບເງື່ອນໄຂ, ລະບຽບຫລັກການຂອງຂໍ້ກຳນົດສະບັບນີ້ຢ່າງຄົບຖ້ວນທຸກປະການ ໃນກຳນົດ 6 ເດືອນ ນັບແຕ່ມື້ປະກາດໃຊ້ຂໍ້ກຳນົດສະບັບນີ້ເປັນຕົ້ນໄປ.

ຖ້າເກີນກຳນົດດັ່ງກ່າວຂ້າງເທິງນີ້, ໂຮງແຮມ-ເຮືອນພັກກ່ຽວຂ້ອງຍັງບໍ່ໄດ້ປັບປຸງແກ້ໄຂຖານະຂອງຕົນ ຈະຖືກຕັກເຕືອນ ແລະ ຖືກປະຕິບັດມາດຕະການຕາມກໍລະນີໜັກເບົາ.

ໃນກໍລະນີມີຄວາມຫຍຸ້ງຍາກ ຄ້າງຄາບາງປະການ ໃນການປັບປຸງແກ້ໄຂຖານະຂອງຕົນ ໃຫ້ທັນກັບກຳນົດເວລາ, ເຈົ້າຂອງໂຮງແຮມ-ເຮືອນພັກ ຫລື ຜູ້ຈັດການ ຈະຕ້ອງມີຄຳຮ້ອງ ແລະ ຂໍ້ສະເໜີຕາມຄວາມເໝາະສົມ.

**ມາດຕາ 37**: ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າມີການປ່ຽນແປງໃໝ່.

ວຽງຈັນ,ວັນທີ 30 / 7 / 1997

ຣ.ລັດຖະມົນຕີ

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

**ເຈືອງ ສົມບູນຂັນ**

( ເຊັນ ແລະ ຈ້ຳກາແລ້ວ )